ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມຊຸກຍູ້ການສ້າງພະນັກງານນຳພາ-ຄຸ້ມຄອງເພດຍິງໃນຂະແໜງການທະນາຄານ



ໃນຕອນເຊົ້າຂອງວັນທີ 29 ພະຈິກ 2018 ທີ່ຫ້ອງປະຊຸມ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງກອງປະຊຸມປຶກສາຫາລືກ່ຽວກັບການຊຸກຍູ້ການສ້າງພະນັກງານນຳພາ-ຄຸ້ມຄອງເພດຍິງໃນຂະແໜງການທະນາຄານ ຂອງສູນກາງສະຫະພັນແມ່ຍິງລາວ ແລະ ທຫລ. ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ຄຳວິງ ທິບພະວົງ ຮອງເລຂາຄະນະພັກ ທຫລ, ຮອງຜູ້ວ່າການ ທຫລ, ຜູ້ປະຈຳການຄະນະປະຈຳພັກ ທຫລ ແລະ ສະຫາຍ ນາງ ບັນດິດ ປະທຸມວັນ ຮອງປະທານສູນກາງສະຫະພັນແມ່ຍິງລາວ, ສະຫາຍ ພານຸສັກ ແກ່ນວົງພະຈັນ, ຄະນະພັກ ທຫລ, ຫົວໜ້າກົມຈັດຕັ້ງແລະພະນັກງານ ທຫລ, ສະຫາຍ ນາງ ສາຍສະໝອນ ຈັນທະຈັກ, ຄະນະພັກ ທຫລ, ປະທານສະຫະພັນແມ່ຍິງ ທຫລ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ພ້ອມດຽວກັນນັ້ນກໍ່ມີບັນດາປະທານສະຫະພັນແມ່ຍິງຮາກຖານ 9 ຮາກຖານທີ່ຂຶ້ນກັບສະຫະພັນແມ່ຍິງ ທຫລ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້ໄດ້ໄຂຂຶ້ນໂດຍການປະຕິບັດຕາມຈິດໃຈຊີ້ນຳຂອງຄະນະພັກ ທຫລ ເພື່ອຕິດຕາມຊຸກຍູ້ການສ້າງພະນັກງານນຳພາ-ຄຸ້ມຄອງເພດຍິງໃນຂະແໜງການທະນາຄານຂອງສູນກາງສະຫະພັນແມ່ຍິງລາວ, ເພື່ອເຮັດໃຫ້ການສ້າງພະນັກງານນຳພາຄຸ້ມຄອງເພດຍິງຢູ່ຂະແໜງການທະນາຄານມີຄວາມສອດຄ່ອງກັບແຜນການກຳນົດການສ້າງພະນັກງານນຳພາ-ຄຸ້ມຄອງ ໃນມະຕິ X ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8. ພ້ອມນີ້, ທັງເປັນການກະກຽມບຸກຄະລາກອນເພດຍິງໃຫ້ແກ່ກອງປະຊຸມໃຫຍ່ ອົງຄະນະພັກ ທຫລ ແລະ ກອງປະຊຸມໃຫຍ່ຂອງສະຫະພັນແມ່ຍິງລາວ ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້.





ໃນປັດຈຸບັນສະຫະພັນແມ່ຍິງ ທຫລ ປະກອບມີ 9 ສະຫະພັນແມ່ຍິງຮາກຖານທີ່ຂຶ້ນກັບສະຫະພັນແມ່ຍິງ ທຫລ, ມີ 65 ໜ່ວຍ, 118 ຈຸ, ມີສະມາຊິກແມ່ຍິງກວມເອົາ 87% ຂອງພະນັກງານທັງໝົດໃນ 9 ຮາກຖານ ມີສະມາຊິກພັກທີ່ເປັນແມ່ຍິງກວມເອົາ 82,5% ຂອງສະມາຊິກພັກທັງໝົດ. ຊຶ່ງໃນໄລຍະທີ່ຜ່ານມາ ຄະນະນຳໃນຂະແໜງການທະນາຄານ ໄດ້ຊີ້ນຳ-ນຳພາຢ່າງໃກ້ຊິດຕິດແທດກັບສະຫະພັນແມ່ຍິງ ທຫລ ໄດ້ເປັນຢ່າງດີ, ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ແກ່ສະມາຊິກແມ່ຍິງຢ່າງເປັນປົກກະຕິ ເຮັດໃຫ້ສະມາຊິກສະຫະພັນແມ່ຍິງໃນຂະແໜງການທະນາຄານມີແນວຄິດອຸ່ນອ່ຽງໜຸ່ນທ່ຽງ, ມີຄວາມສະຫງົບໂດຍພື້ນຖານ, ມີຄຸນທາດການເມືອງທີ່ໜັກແໜ້ນ ແລະ ບໍ່ມີປະກົດການຫຍໍ້ທໍ້ທີ່ໃຫຍ່ເກີດຂຶ້ນໃນຂະແໜງການທະນາຄານ, ໄດ້ມີການປັບປຸງການຈັດຕັ້ງ, ແບບແຜນວິທີນຳພາ-ການເຮັດວຽກຂອງອົງການຈັດຕັ້ງແມ່ຍິງເພື່ອຮັບປະກັນການເຮັດວຽກຂອງຕົນໃຫ້ສອດຄ່ອງກັບຫຼັກການລວມຂອງພັກ, ພ້ອມທັງເອົາໃຈໃສ່ຍົກລະດັບຄວາມຮູ້-ຄວາມສາມາດດ້ານວິຊາສະເພາະຂອງສະມາຊິກແມ່ຍິງ ເຊິ່ງສະແດງອອກຄື: ມີສະມິຊິກແມ່ຍິງຫຼາຍສະຫາຍໄດ້ຖືກບັນຈຸຊັບຊ້ອນເຂົ້າໃນຕຳແໜ່ງສຳຄັນ. ນອກຈາກນີ້, ສະມາຊິກແມ່ຍິງ ຍັງໄດ້ປະກອບສ່ວນເຂົ້າໃນຂະບວນການດ້ານຕ່າງໆ ບໍ່ວ່າຈະເປັນຂະບວນການທາງດ້ານກິລາ, ສິລະປະ, ວິຊາສະເພາະ ແລະ ທາງສັງຄົມເຊັ່ນ: ການບໍລິຈາກເລືອດ, ການລະດົມວັດຖຸປັດໃຈເພື່ອຊ່ວຍເຫຼືອນາຍ ແລະ ພົນທະຫານທີ່ຢູ່ຫ່າງໄກສອກຫຼີກ, ຜູ້ດ້ອຍໂອກາດ ແລະ ຊຸກຍູ້ຂະບວນການທາງສັງຄົມໃນວັນສຳຄັນຕ່າງໆຂອງຊາດ ແລະ ຂອງພັກຢ່າງຕັ້ງໜ້າ, ໂດຍສະເພາະວຽກງານທີ່ພົ້ນເດັ່ນໃນຫວ່າງບໍ່ດົນມານີ້ແມ່ນການປະກອບສ່ວນເຂົ້າໃນການສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ຢ່າງເປັນຂະບວນການຟົດຟື້ນ. ດ້ານວຽກງານແມ່ຍິງ 3 ດີ ໂດຍຜ່ານການປະເມີນໄລຍະ 6 ເດືອນຕົ້ນປີ 2018 ສະມາຊິກແມ່ຍິງໃນຂະແໜງການທະນາຄານສາມາດບັນລຸແມ່ຍິງ 3 ດີໄດ້ຫຼາຍກວ່າ 90% ແລະ ລື່ນແຜນການທີ່ໄດ້ກຳນົດໄວ້.





#ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.